# ກ່ຳພ້າ ກັບ ນາງວາ

ເປັນຄຳເວົ້າທຳມະດາ. ດວງເດືອນ ບຸນຍາວົງ. ຮູບແຕ້ມ. ວົງສະຫວັນ ດຳລົງສຸກ



ດອກເກດ
Dokked
Publising Co.,Ltd

# ກໍ່າພ້າ ກັບ ນາງງາ

ນິທານພື້ນເມືອງ ເລື່ອງ

# *ກ່ຳພ້າ ກັບ ນາງງາ*

ພາກ 2


ຂຽນເປັນຄຳເວົ້າທຳມະດາ ນ. ດວງເດືອນ ບຸນຍາວົງ

ຮູບປະກອບ ທ. ວົງສະຫວັນ ດຳລົງສຸກ

ບັນນາທິການຮູບ ແລະບົດ ນ. ດວງແຂ ບຸນຍາວົງ

ອອກແບບຈັດໜ້າ ບໍລິສັດ ດອກເກດ ຈັດພິມ ຈຳກັດ

ດອກເກດ
DokkeD



ສະຫງວນລິຂະສິດ: ນາງ ດວງເດືອນ ບຸນຍາວົງ
ຜູ້ໃດຈະນຳເອົາເນື້ອຄວາມຕອນໃດຕອນໜຶ່ງ ຫລື ຮູບໃດໜຶ່ງ ໃນປຶ້ມນີ້ ໄປຊົມໃຊ້ ຫລືພິມອອກໃໝ່ ຕ້ອງໄດ້ຂໍອະນຸຍາດ ຈາກຜູ້ສະຫງວນລິຂະສິດ ຕາມກົດໝາຍ/ກົດລະບຽບ ວ່າດ້ວຍ ການປົກປ້ອງຊັບສິນທາງປັນຍາ.



ທະບຽນອະນຸຍາດເລກທີ ທບ 36/ພຈ 051099

ພິມຄັ້ງທີ 5 (ປັບປຸງໃໝ່) ຈຳນວນ 2000 ເຫລັ້ມ

ພິມທີ່ ຈຳປາການພິມ

ວຽງຈັນ ສ.ປ.ປ.ລາວ. ມັງກອນ 2003

# ກ່ຳພ້າ ກັບ ນາງງາ



ຂຽນເປັນຄຳເວົ້າທຳມະດາ : ດວງເດືອນ ບຸນຍາວົງ

ຮູບປະກອບ : ວົງສະຫວັນ ດຳລົງສຸກ



ນັບແຕ່ກ່ຳພ້າ ໄດ້ນາງງາ ມາເປັນຄູ່ຊີວິດ ທ້າວກໍມີຄວາມສຸກສະບາຍ ບໍ່ງຽບເຫງົາ ເປົ່າປ່ຽວ ຄືແຕ່ເກົ່າ. ເຖິງເດືອນຈຽງ ເຂົ້າໃນນາສຸກເຮື່ອ ໃບຫຼ່ວແລ້ວ ພວກຜີທັງຫລາຍກໍມາຊ່ອຍກ່ຽວ ຂົນໃສ່ເລົ້າ ໃສ່ເຍຽໄວ້ຢ່າງຮຽບຮ້ອຍ. ເອົາເຂົ້າຂຶ້ນເລົ້າແລ້ວ ກ່ຳພ້າເຮັດບຸນລ້ຽງຜີຢ່າງໃຫຍ່.

(ດ້ວຍເຫດນີ້ ຊາວລາວຈຶ່ງມີປະເພນີ ເຮັດບຸນຄູນເຂົ້າ ລ້ຽງຜີໄຮ່ຜີນາຜີເລົ້າ ສືບຕໍ່ມາທຸກວັນນີ້)

ສັດຕ່າງໆ ທີ່ເຄີຍຖືກແຮ້ວ ຂອງກ່ຳພ້າ ອອກມາຢ້ຽມຢາມເປັນບາງຄັ້ງບາງຄາວ ແຕ່



ຜີນ້ອຍ ນັ້ນມາຢູ່ຮັບໃຊ້ໃນເຮືອນ ພໍປານວ່າວ່າເປັນໄທເຮືອນດຽວກັນ.
ເມື່ອໃດ ພວກສັດມາຢາມ ນາງງາກໍຫລິ້ນກັບພວກມັນ ຢ່າງສະຫນິດສະຫນົມ
ເອົາເຂົ້າເປືອກ ສາລີ ໂຮຍຫວ່ານໃຫ້ນົກ ໄກ່ປ່າກິນ ເອົາຫມາກກ້ວຍ ຫມາກຈຽງ
ໃຫ້ເຫງັນ, ສັດຕົວໃດ ຢາກກິນອັນໃດ ນາງກໍໃຫ້ກິນ ທັງສັ່ງສອນ
ບໍ່ໃຫ້ຂົ່ມເຫງບຽດບຽນກັນ.



ລະດູແລ້ງຜ່ານໄປແລ້ວ ຟ້າຝົນໃໝ່ ພວມຈະຢ້ຽມເຢົ້າມາ  ກໍ່າພ້າ ກັບນາງງາ ດໍາລົງຊີວິດ ຢູ່ໃນເຮືອນຫລັງງາມ ຖ້າມກາງປ່າດົງທໍາມະຊາດ ບ່ອນພວກຜີມາຊ່ອຍບຸກເບີກຖາກຖາງເປັນທົ່ງນາແປນກວ້າງສຸດຊົ່ວຕາ.



ກ່ອນເຂົ້າໜ້າຝົນປີຕໍ່ມາ ມື້ໜຶ່ງ ຕອນຄ້າຍແລງ ພວກໝູ່ຂອງກ່ຳພ້າ ສີ່ຫ້າຄົນ ໄດ້ ອອກມາຊອກຄວາຍທີ່ຫລົງປ່າໄປໄກ ຂະນະທີ່ຕ້ອນຄວາຍເມື່ອແຫລ່ງນັ້ນ ພວກເຂົາຜ່ານມາໃກ້ໆ ສວນແລະທົ່ງນາຂອງກ່ຳພ້າ. ມີຜູ້ໜຶ່ງເວົ້າຂຶ້ນວ່າ:

- ດົນແລ້ວ ບໍ່ເຫັນບັກກ່ຳພ້າ ເຂົ້າໄປໃນ ບ້ານ ອໍທານເຊົ້າ ຈັກມັນເປັນຕາຍຮ້າຍດີແນວໃດ ພວກເຮົາໄປຢາມເບິ່ງມັນດີບໍ່ ?

ດັ່ງນັ້ນ ພວກເຂົາຈຶ່ງພາກັນມຸ່ງໜ້າມາຍັງດົງໃຫຍ່ ບ່ອນພວກ ເຂົາເຄີຍມາຊ່ອຍກ່ຳພ້າ ປຸກຕູບ ແຕ່ສິ່ງທີ່ພວກເຂົາໄດ້ເຫັນ ມັນບໍ່ໜ້າເປັນໄປໄດ້ !

ບໍລິເວນ ທີ່ເຄີຍເປັນປ່າຮົກດົງໜາ ບັດນີ້ ແປນສະອາດ ມີຕົ້ນໄມ້ນາໆຊະນິດ ປູກລຽນເປັນແຖວຖັນ ມີທັງຕົ້ນມ່ວງ ຕົ້ນມີ້ ຕົ້ນໝາກ ຕົ້ນພ້າວ ຊູໃບໄກວແກ່ວງຕາມແຮງລົມ ກົກສີດາ ກົກພິລາ ອອກໝາກ ສຸກເຫລືອງແດງ ໝູ່ນົກສົ່ງສຽງຈໍແຈນັບນອງ ມີຊີວິດຊີວາ. ພວກເຂົາຕົກໃຈ ບໍ່ກ້າເຂົ້າໄປໃກ້ ໄດ້ແຕ່ຈອບເບິ່ງຢູ່ໄກໆ !

ເວລານັ້ນ ເປັນຍາມແລງຄ້ອຍຄໍ່າ ນາງງາ ລົງມາເກັບຜັກໃນສວນໄປແຕ່ງກິນ ນາງຂັບລໍາຄ່ອຍໆ.

ພວກເຂົາເຫັນອ້າຍບ່າວຄົນໜຶ່ງ ພວມຜ່າຟືນ ທັງລໍາອຸ່ມໆ. ພວກເຂົາຈື່ໄດ້ວ່າ



# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນໍາ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ